

## ຄວາມເຊື່ອ: ເດັກຊາຍບໍ່ມີອາການເຈັບນົມເມື່ອເຂົ້າສູ່ໄວຈະເລີນພັນ

ເມື່ອເດັກຍິງ/ຊາຍເລີ່ມເຂົ້າສູ່ໄວຈະເລີນພັນ ຮ່າງກາຍຂອງພວກເຂົາກໍຈະມີການປ່ຽນແປງທີ່ແຕກຕ່າງກັນໄປ. ໄວໜຸ່ມຊາຍກໍເຊັ່ນດຽວກັນ, ພວກເຂົາມີອາການເຈັບນົມເຊັ່ນດຽວກັນ ກັບໄວໜຸ່ມຍິງແຕ່ອາການຈະແຕກຕ່າງກັນໄປຂຶ້ນນໍາຮ່າງກາຍຂອງແຕ່ລະຄົນ. ອາການນົມຕຸ່ມໃນເດັກຊາຍຈະເລີ່ມໃນຊ່ວງອາຍຸ 12-15 ປີຈະມີກ້ອນແຂງບໍລິເວນກ້ອງຫົວນົມມີອາການປວດ, ບາງເທື່ອກໍມີການອັກເສບຮ່ວມຢູ່ນໍາ. ເນື່ອງຈາກມີການສ້າງຮອກໂມນເພດຫຼາຍ ແລະ ຮອກໂມນນີ້ໄປກະຕຸ້ນຕ່ອມນໍ້ານົມຂອງຜູ້ກ່ຽວເຮັດໃຫ້ ເຕົ້ານົມຂະຫຍາຍໂຕບໍ່ທັນຈົນມີອາການດັ່ງກ່າວ